ກອງທຶນໂລກ

# ຂໍ້ກຳນົດຂອງສະມາຊິກ CCM
# ຄວາມຮັບຜິດຊອບຂອງສະມາຊິກ CCM

ຂໍ້ກຳນົດດ້ານຈັນຍາບັນ

ຂອງສະມາຊິກ

ຄະນະກຳມະການປະສານງານກອງທຶນໂລກ

ຄວາມສະໝ່ຳສະເໝີໃນການປະຕິບັດໜ້າທີ່

ຄວາມຮັບຜິດຊອບ

ຄວາມຊື່ສັດ

ກຽດສັກສີ ແລະ ຄວາມເຄົາລົບ

## ສາລະບານ


CCM – ເວທີປຶກສາຫາລືທີ່ເປັນເອກະລັກ .......... 3

ສໍາລັບຄວາມກ້າວໜ້າດ້ານສາທາລະນະສຸກ .......... 3

ໜ້າທີ່ຂອງຄະນະກໍາມະການປະສານງານກອງທຶນໂລກ .......... 3

ຄວາມຮັບຜິດຊອບຂອງປະທານ CCM, ຄະນະກໍາມະການບໍລິຫານ & ຄະນະກໍາມະການດ້ານຈັນຍາບັນ .......... 4

ການບັງຄັບໃຊ້ຂໍ້ກໍານົດ .......... 4

ຄວາມສະໝໍ່າສະເໝີໃນການປະຕິບັດໜ້າທີ່. .......... 5

ຄວາມຮັບຜິດຊອບ .......... 5

ຄວາມໂປ່ງໃສ .......... 5

ກະກຽມ ແລະ ຫ້າວຫັນໃນການປະກອບສ່ວນ .......... 6

ຄວາມຮັບຜິດຊອບໃນການນໍາໃຊ້ຊັບສິນຂອງ CCM .......... 6

ຄວາມຮັບຜິດຊອບໃນການຄຸ້ມຄອງຂໍ້ມູນຂ່າວສານ .......... 6

ຄວາມຊື່ສັດ .......... 7

ຄວາມບໍ່ລໍາອຽງ ແລະ ການຫຼີກລ້ຽງຂໍ້ຂັດແຍ່ງດ້ານຜົນປະໂຫຍດ .......... 7

ຄວາມໜ້າເຊື່ອຖື ແລະ ຄວາມຊັດເຈນ .......... 8

ຄວາມຍຸຕິທໍາ ແລະ ຄວາມສອດຄ່ອງ .......... 8

ຄວາມຊື່ສັດ .......... 10

ກອງທຶນໂລກຫ້າມ ແລະ ຕ້ານທຸກຮູບແບບຂອງການສໍ້ໂກງ ແລະ ການສໍ້ລາດບັງຫຼວງ. .......... 10

ກຽດຕິຍົດ ແລະ ຄວາມເຄົາລົບ .......... 11

ຮັບປະກັນການເຄົາລົບສິດທິມະນຸດ, ລວມທັງການບໍ່ຈໍາແນກ .......... 11

ການເຄົາລົບຊຶ່ງກັນ ແລະ ກັນ .......... 11

ການສະແດງຄໍາຄິດຄໍາເຫັນ. .......... 12

ສະມາຊິກ CCM ມີໜ້າທີ່ໃນການລາຍງານ .......... 12

ສະມາຊິກ CCM ຈະລາຍງານ ຫຼື ຂໍຄໍາແນະນໍາ ຢ່າງເປັນຄວາມລັບໄດ້ແນວໃດ? .......... 13

# CCM – ເວທີປຶກສາຫາລືທີ່ເປັນເອກະລັກ

## ສໍາລັບຄວາມກ້າວໜ້າດ້ານສາທາລະນະສຸກ

CCMs ແມ່ນກົນໄກການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນໃນການຄຸ້ມຄອງບັນດາໂຄງການແຫ່ງຊາດດ້ານພະຍາດເອດ, ວັນນະໂລກ, ແລະ ໄຂ້ຍຸງ. CCMs ຂໍການສະໜັບສະໜູນ ດ້ານການເງິນຈາກກອງທຶນໂລກໃນນາມຂອງປະເທດ ແລະ ສະໜອງຍຸດດທະສາດການຕິດຕາມກວດກາ ເພື່ອຮັບປະກັນໃຫ້ມີປະສິດທິຜົນ ແລະ ຍຸດທະສາດໃນການຈັດຕັ້ງປະຕິບັດແຜນງານ.

CCM ທີ່ມີປະສິດຕິຜົນ ແມ່ນຈຸດໃຈກາງ ຂອງພາລະກິດ ຂອງກອງທຶນໂລກໃນການ "ລົງທຶນຂອງໂລກ ເພື່ອຢຸດຕິພະຍາດເອດ, ວັນນະໂລກ ແລະໄຂ້ຍຸງ." ມັນແມ່ນເວທີປຶກສາຫາລືລະດັບປະເທດທີ່ມີເອກະລັກສະເພາະເຊິ່ງລວມເອົາຕົວແທນທີ່ມາຈາກທຸກພາກສ່ວນ, ລວມທັງປະຊາກອນທີ່ຖືກຜົນກະທົບ ແລະ ຂະແໜງສາທາລະນະສຸກຕ່າງໆ (ເຊັ່ນ: ການສ້າງຄວາມເຂັ້ມແຂງໃຫ້ລະບົບສາທາລະນະສຸກ) ເພື່ອບັນລຸວິໄສທັດຂອງໂລກທີ່ປາສະຈາກການລະບາດຂອງທັງສາມພະຍາດນີ້.

ຮູບແບບຂອງກອງທຶນໂລກ ໄດ້ຖືກສ້າງຕັ້ງຂຶ້ນ ບົນພື້ນຖານຫຼັກການສະເພາະໃດໜຶ່ງ, ເຊິ່ງປະກອບດ້ວຍຄຸນຄ່າຈັນຍາບັນ:

| ຫຼັກການຂອງກອງທຶນໂລກ | ຄຸນຄ່າດ້ານຈັນຍາບັນຂອງກອງທຶນໂລກ |
|---|---|
| ປະເທດເປັນເຈົ້າການ | ຄວາມສະໝໍ່າສະເໝີໃນການປະຕິບັດໜ້າທີ່ |
| ຄູ່ຮ່ວມງານ | ຄວາມຮັບຜິດຊອບ |
| ຄວາມໂປ່ງໃສ | ຄວາມສັດຊື່ |
| ສະໜອງທຶນຕາມການຈັດຕັ້ງປະຕິບັດ | ກຽດສັກສີ ແລະ ຄວາມເຄົາລົບ |

ໃນຖານະທີ່ເປັນອົງກອນຫຼັກໃນການຮັບປະກັນການສະໜອງທຶນຂອງກອງທຶນໂລກ ແລະ ຕິດຕາມກວດກາຜົນສໍາເລັດຂອງໂຄງການ, CCM ໄດ້ຖືກຄາດຫວັງວ່າຈະມີຫຼັກການ ແລະ ຄຸນຄ່າເຊັ່ນດຽວກັນ. ຈັນຍາບັນ, ຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບໃນການຕັດສິນໃຈ ໂດຍ CCMs ແມ່ນກຸນແຈ ສູ່ຄວາມສໍາເລັດຂອງໂຄງການໃນລະດັບປະເທດ.

## ໜ້າທີ່ຂອງຄະນະກໍາມະການປະສານງານກອງທຶນໂລກ

ຫຼັກການໃນການດໍາເນີນງານນີ້ໄດ້ອະທິບາຍເຖິງຄວາມຕ້ອງການ ແລະ ຄວາມຄາດຫວັງຕໍ່ສະມາຊິກ CCM ແຕ່ລະຄົນ (ລວມທັງກົນໄກການປະສານງານລະດັບພາກພື້ນ, ສະມາຊິກສໍາຮອງ ແລະ ພະນັກງານກອງເລຂາ CCM) ໃນການປະຕິບັດໜ້າທີ່ຂອງຕົນ, ໃຫ້ສອດຄ່ອງກັບຂໍ້ແນະນໍາແລະຄວາມຕ້ອງການສໍາລັບ CCMs ແລະ ນະໂຍບາຍພາຍໃນຂອງ CCM.

ສະມາຊິກ CCM ຖືກຮຽກຮ້ອງໃນການ:

- ອ່ານ, ສ້າງຄວາມຊິນເຄີຍ ແລະ ປະຕິບັດຕາມຂໍ້ກໍານົດ
- ຢັ້ງຢືນ, ຕາມການຮຽກຮ້ອງຂອງກອງທຶນໂລກ, ຄໍາໝັ້ນສັນຍາໃນການປະຕິບັດຕາມຂໍ້ກໍານົດແລະ ພາລະບົດບາດຂອງຕົນໃນນາມສະມາຊິກ CCM
- ປະຕິບັດຈັນຍາບັນ ແລະ ເປັນແບບຢ່າງທີ່ດີ ໃນການເປັນສະມາຊິກ CCM
- ຊຸກຍູ້ບຸກຄົນໃດກໍ່ຕາມທີ່ມີຂໍ້ຂ້ອງໃຈກ່ຽວກັບການລະເມີດຂໍ້ກໍານົດນີ້ ຫຼື ຂໍ້ແນະນໍາ CCM
- ຕັ້ງຄໍາຖາມ ແລະ ຂໍ້ສົນໃຈ ຖ້າພວກເຂົາຮັບຮູ້ເຖິງການລະເມີດນະໂຍບາຍຂອງ CCM, ຂໍ້ກໍານົດນີ້, ຫຼື ຄວາມຊື່ສັດ ຕໍ່ກັບກົດໝາຍ.

**ຂໍ້ກຳນົດດ້ານຈັນຍາບັນນີ້**

**ຄາດຫວັງວ່າສະມາຊິກ CCM ຈະ:**

- ປະຕິບັດໜ້າທີ່ຂອງຕົນຢ່າງສະໝ່ຳສະເໝີ
- ປະຕິບັດດ້ວຍຄວາມຮັບຜິດຊອບ
- ປະຕິບັດດ້ວຍຄວາມຊື່ສັດ
- ປະຕິບັດດ້ວຍກຽດສັກສີ ແລະ ດ້ວຍຄວາມເຄົາລົບ
- ມີການສະແດງຄວາມຄິດເຫັນ

## ຄວາມຮັບຜິດຊອບຂອງປະທານ CCM, ຄະນະກຳມະການບໍລິຫານ & ຄະນະກຳມະການດ້ານຈັນຍາບັນ

- ຊຸກຍູ້ສະມາຊິກ CCM ໃຫ້ເຂົ້າໃຈຂໍ້ກຳນົດ ແລະ ເອກະສານບໍລິຫານຄຸ້ມຄອງຕ່າງໆ: (ຂໍ້ແນະນຳ CCM, ນະໂຍບາຍຂໍ້ຂັດແຍ້ງດ້ານຜົນປະໂຫຍດຂອງ CCM ແລະ ກົດລະບຽບຕ່າງໆຂອງ CCM)
- ຮັບປະກັນໃຫ້ສະມາຊິກ CCM ໄດ້ຮັບຂໍ້ກຳນົດ ແລະ ນະໂຍບາຍຂໍ້ຂັດແຍ່ງດ້ານຜົນປະໂຫຍດຂອງ CCM, ໄດ້ອ່ານຂໍ້ນົດແລະນະໂຍບາຍດັ່ງກ່າວ ແລະ ຮັບປະກັນການບັງຄັບໃຊ້ນະໂຍບາຍຢ່າງຖືກຕ້ອງ ແລະ ຍຸຕິທຳ
- ຮັບປະກັນວ່າຈະບໍ່ມີໃຜຖືກລົງໂທດ ຫຼື ຖືກທຳຮ້າຍ ເນື່ອງຈາກໄດ້ຍົກຂໍ້ຂ້ອງໃຈ ຫຼື ຄຳຖາມກ່ຽວກັບຂໍ້ກຳນົດ
- ສ້າງສະພາບແວດລ້ອມທີ່ມີສ່ວນຮ່ວມແລະຄວາມເຄົາລົບພາຍໃນ CCM ໂດຍການປະກອບສ່ວນຢ່າງຕັ້ງໜ້າແລະມີປະສິດທິຜົນຈາກສະມາຊິກທຸກຄົນ ແລະ ມີຄວາມໂປ່ງໃສແລະສະເໝີພາບໃນການຕັດສິນໃຈ

### ພະນັກງານ ກອງເລຂາ CCM

ພະນັກງານ ຂອງ CCM **ຈະຕ້ອງ**

ໃຫ້ການສະໜັບສະໜູນ ທີ່ທັນເວລາ, ເປັນມືອາຊີບ, ແລະ ໂປ່ງໃສແກ່ສະມາຊິກທັງໝົດ ຂອງ CCM, ລວມທັງການຄຸ້ມຄອງບໍລິຫານທີ່ມີຄວາມຮັບຜິດຊອບທາງດ້ານຂໍ້ມູນຂ່າວສານ, ງົບປະມານ, ແລະ ບົດບັນທຶກກອງປະຊຸມ ຂອງ CCM.

ຖ້າສະມາຊິກ CCM ມີຄຳຖາມກ່ຽວກັບວິທີການປະຕິບັດຕາມຂໍ້ກຳນົດນີ້, ຫຼື ຖ້າພວກເຂົາມີຄວາມຂໍ້ຂ້ອງໃຈ ຫຼື ສົງໄສວ່າບຸກຄົນອື່ນອາດຈະບໍ່ປະຕິບັດຕາມຂໍ້ກຳນົດນີ້, ພວກເຂົາ**ຈຳເປັນຕ້ອງ**ຮັກສາຂໍ້ກຳນົດນີ້ ໂດຍການສະແດງອອກ:

- ຖ້າເປັນໄປໄດ້, ຍົກບັນຫາຂຶ້ນພາຍໃນ CCM.
- ໃນເວລາດຽວກັນ, ແຈ້ງຕໍ່ກອງທຶນໂລກກ່ຽວກັບບັນຫາດັ່ງກ່າວ.

ກອງທຶນໂລກຈະບໍ່ເມີນເສີຍຕໍ່ທຸກຮູບການຂອງການຕໍ່ຕ້ານຕໍ່ຜູ້ທີ່ປະຕິບັດຂໍ້ກຳນົດນີ້ຢ່າງຖືກຕ້ອງ ແລະ ໄດ້ສະແດງຄຳຄິດເຫັນ.

## ການບັງຄັບໃຊ້ຂໍ້ກຳນົດ

ຂໍ້ກຳນົດນີ້ໄດ້ຖືກລວມເຂົ້າເປັນສ່ວນປະກອບຂອງເງື່ອນໄຂທີ 6 ຂອງ ຂໍ້ແນະນຳ ແລະ ເງື່ອນໄຂ ສຳລັບຄະນະກຳມະການປະສານງານລະດັບປະເທດ. ດັ່ງນັ້ນ, ກອງທຶນໂລກຈະຕິດຕາມກວດກາການປະຕິບັດຂໍ້ກຳນົດຂອງ CCM ນີ້ເພື່ອເປັນເງື່ອນໄຂໃນການເຂົ້າເຖິງທຶນຊ່ວຍເຫຼືອຂອງກອງທຶນໂລກ, ແລະ ການຍຶດໝັ້ນຂອງສະມາຊິກ CCM ຕໍ່ກັບຄວາມຄາດຫວັງທີ່ໄດ້ລະບຸໄວ້ ໃນຂໍ້ກຳນົດນີ້ ຈະເປັນບ່ອນອີງໃຫ້ແກ່ກອງທຶນໂລກປະເມີນການຈັດຕັ້ງປະຕິບັດໂດຍລວມຂອງ CCM.

CCM **ຈໍາເປັນຕ້ອງ**ບັງຄັບໃຫ້ສະມາຊິກແຕ່ລະຄົນປະຕິບັດໃຫ້ສອດຄ່ອງກັບຂໍ້ກໍານົດນີ້, ໂດຍຮັບປະກັນຄວາມຍຸຕິທໍາ ແລະ ຂັ້ນຕອນທີ່ເໝາະສົມ. ຜົນຈາກບັງຄັບໃຊ້ຂໍ້ກໍານົດນີ້ຄວນຈະເປັນສັດສ່ວນ ແລະ ອາດຈະລວມເຖິງການຖອນສິດໃນການຕັດສິນບັນຫາ, ປົດບາດການເປັນຜູ້ນໍາ, ຫຼື CCM.

## ຄວາມສະໝໍ່າສະເໝີໃນການປະຕິບັດໜ້າທີ່

ໜ້າທີ່ທໍາອິດແລະສໍາຄັນໃນການປະຕິບັດໜ້າທີ່ ຂອງສະມາຊິກ CCM ແມ່ນເພື່ອກຸ່ມຄົນທີ່ຕິດເຊື້ອ, ທີ່ໄດ້ຮັບຜົນກະທົບ, ຫຼື ມີຄວາມສ່ຽງຕໍ່ການຕິດເຊື້ອ HIV, ໄຂ້ຍຸງ, ແລະ ວັນນະໂລກ.

ສະມາຊິກ CCM ແມ່ນມີພັນທະຕໍ່ອົງການຈັດຕັ້ງຂອງຕົນ ແລະ ພາກສ່ວນກ່ຽວຂ້ອງ ໃນການສະໜັບສະໜູນວຽກງານສາທາລະນະສຸກໂດຍລວມເພື່ອຢຸດຕິການລະບາດຂອງພະຍາດດັ່ງກ່າວ.

ສະມາຊິກ CCM ຖືກຄາດຫວັງວ່າຈະສາມາດຮັບປະກັນການນໍາໃຊ້ທຶນຂອງກອງທຶນໂລກໄດ້ຢ່າງມີປະສິດທິພາບ ແລະ ມີປະສິດຕິຜົນເພື່ອບັນລຸ

ຜົນສູງສຸດໂດຍ:

- ການຍື່ນຄໍາຮ້ອງຂໍທຶນທີ່ຖືກອອກແບບມາເພື່ອສະເໜີກິດຈະກໍາແບບປະສົມປະສານຢ່າງມີປະສິດທິຜົນທີ່ສຸດ, ລວມທັງເປົ້າໝາຍປະຊາກອນທີ່ໄດ້ຮັບຜົນກະທົບ ແລະ ຜູ້ທີ່ມີຄວາມສ່ຽງທີ່ສໍາຄັນ, ໂດບສອດຄ່ອງກັບແຜນຍຸດທະສາດແຫ່ງຊາດ / ກໍລະນີການລົງທຶນ.
- ຮັບປະກັນວ່າຜູ້ຈັດຕັ້ງປະຕິບັດ ແລະ ລະບົບ ແມ່ນມີຄວາມສາມາດໃນການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອ ຢ່າງມີປະສິດຕິຜົນ.
- ຕິດຕາມກວດກາການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຢ່າງມີປະສິດທິຜົນ ແລະ ຖືກຕ້ອງຕາມກໍານົດເວລາ ແລະ ການນໍາໃຊ້ຊັບພະຍາ ກອນ ຢ່າງລະມັດລະວັງ ແລະ ເໝາະສົມເພື່ອໃຫ້ບັນລຸ ຫຼື ລື່ນຄາດໝາຍທີ່ກໍານົດໄວ້.
- ສະແດງຄໍາຄິດເຫັນ ໃນກໍລະນີທີ່ກິດຈະກໍາຂ້າງເທິງ ຫາກບໍ່ໄດ້ຮັບການຈັດຕັ້ງປະຕິບັດ.

## ຄວາມຮັບຜິດຊອບ

ສະມາຊິກ CCM ມີຄວາມຮັບຜິດຊອບຕໍ່ປະຊາກອນທີ່ຕົນເປັນຕົວແທນ, ແລະ ໃນຖານະເປັນກຸ່ມ, CCM ຍັງມີຄວາມຮັບຜິດຊອບຕໍ່ພາລະກິດ ໃນການຢຸດຕິການແຜ່ລະບາດຂອງພະຍາດ ຢູ່ພາຍໃນປະເທດ.

ສະມາຊິກ CCM ຖືກຄາດຫວັງວ່າຈະ:

### ມີຄວາມໂປ່ງໃສ

### ກະກຽມ ແລະ ຫ້າວຫັນ ໃນການເຂົ້າຮ່ວມ CCM

### ເປັນເຈົ້າການໃນການຮັບຜິດຊອບຕໍ່ຊັບສິນ ຂອງ CCM

### ຈັດການຂໍ້ມູນຂ່າວສານຢ່າງມີຄວາມຮັບຜິດຊອບ

## ຄວາມໂປ່ງໃສ

ເນື່ອງຈາກວ່າ CCM ແມ່ນອົງກອນສາທາລະນະທີ່ເປັນຕົວແທນໃຫ້ແກ່ສາທາລະນະສຸກ ແລະ ຄູ່ຮ່ວມງານທີ່ມີຜົນປະໂຫຍດຮ່ວມກັນ, ສະມາຊິກ CCM ຈໍາເປັນຕ້ອງເປີດໃຈກັບສາທາລະນະຊົນ, ໂດຍສະເພາະກັບກຸ່ມຄົນທີ່ຕົນເປັນຕົວແທນ ແລະ ເພື່ອເປັນຕົວແທນຄວາມຄິດເຫັນຂອງຜູ້ມີສ່ວນຮ່ວມຂອງຕົນໃນ CCM. ສະມາຊິກ CCM **ຈື່ງຈໍາເປັນຕ້ອງ**:

- ແບ່ງປັນຂໍ້ມູນທີ່ໄດ້ຮັບແກ່ອົງກອນໂດຍໄວ ແລະ ລະອຽດພຽງພໍ ເພື່ອໃຫ້ມີຄວາມສາມາດປະກອຍຄໍາຄິດເຫັນທີ່ສ້າງສັນເຂົ້າໃນຕັດສິນໃຈ.

- ເກັບກຳ ແລະ ສະທ້ອນຄວາມຄິດເຫັນ ແລະ ຂໍ້ຂ້ອງໃຈ ຂອງອົງກອນ ຕໍ່ກອງປະຊຸມ CCM, ໃນຂະນະທີ່ຍັງຍຶດໝັ້ນການປະຕິບັດໜ້າທີ່ຢ່າງສະໝໍ່າສະເໝີ ຕໍ່ຜົນປະໂຫຍດທາງດ້ານສາທາລະນະສຸກ.
- ລາຍງານຕໍ່ອົງກອນຂອງຕົນ ກ່ຽວກັບມະຕິ ຂອງ CCM, ໂດຍສະເພາະໃນເວລາທີ່ອົງກອນໄດ້ມີການປະກອບຄຳຄິດເຫັນ.

## ກະກຽມ ແລະ ຫ້າວຫັນໃນການປະກອບສ່ວນ

ສະມາຊິກ CCM ໄດ້ຖືກຄາດຫວັງວ່າຕົນຈະມີບົດບາດໃນ CCM ຢ່າງຈິງຈັງ:

- ເຂົ້າຮ່ວມກອງປະຊຸມ CCM ຕາມກຳນົດເວລາຢ່າງເປັນປະຈຳ.
- ກະກຽມ ສຳລັບການປະຊຸມ ໂດຍການອ່ານເອກະສານກ່ຽວກັບກອງປະຊຸມ ແລະ ປະຕິບັດຕາມຄຳໝັ້ນສັນຍາທີ່ໄດ້ໃຫ້ໄວ້ກ່ອນການປະຊຸມ.
- ຮັບປະກັນວ່າມະຕິ ຂອງ CCM ແມ່ນຖືກບັນທຶກຢ່າງຖືກຕ້ອງ.
- ຮ່ວມມືຢ່າງເຕັມສ່ວນກັບຜູ້ຈັດຕັ້ງປະຕິບັດແລະ ອົງການກອງທຶນໂລກ.

ສະມາຊິກ CCM **ຕ້ອງ**ສ້າງຄວາມເຊື່ອໝັ້ນໃຫ້ຜູ້ຈັດຕັ້ງປະຕິບັດ ຕໍ່ການເປັນຕົວແທນ, ການປະຕິບັດໜ້າທີ່ ແລະ ການດຳເນີນການຕ່າງໆຂອງຕົນ ໂດຍການມີສ່ວນຮ່ວມໃນການຕິດຕາມກວດກາທຶນຊ່ວຍເຫຼືອ, ຊຶ່ງລວມມີ:

- ຫ້າວຫັນໃນການລົງປະຕິບັດວຽກງານພາກສະໜາມ (ຄຳນຶງເຖິງ ຄວາມປອດໄພສ່ວນຕົວ) ແລະ ເຂົ້າຮ່ວມກອງປະຊຸມ ທີ່ພົວພັນກັບພະຍາດທີ່ກ່ຽວຂ້ອງ.
- ປະກອບຄຳຄິດຄຳເຫັນທີ່ໄດ້ຈາກບັນດາອົງກອນ ທີ່ຕິດພັນກັບການເຂົ້າເຖິງ, ຄຸນນະພາບແລະ ຄວາມສະເໝີພາບ ຂອງການບໍລິການທີ່ມາຈາກການຊ່ວຍເຫຼືອ.
- ເຂົ້າຮ່ວມໃນການວິເຄາະຜົນໄດ້ຮັບ ຂອງທຶນຊ່ວຍເຫຼືອ ແລະ ການສືບສວນເຖິງບັນຫາຕ່າງໆ ໂດຍຜ່ານການສົນທະນາກັບຜູ້ຈັດຕັ້ງປະຕິບັດ.
- ປະກອບສ່ວນເຂົ້າໃນຄວາມພະຍາຍາມໃນການແກ້ໄຂບັນຫາທີ່ເກີນຂອບເຂດສິດອຳນາດ ຫຼື ຄວາມສາມາດຂອງຜູ້ຈັດຕັ້ງປະຕິບັດ.
- ຫ້າວຫັນໃນການນຳສະເໜີທິດທາງເພື່ອປັບປຸງວຽກງານຂອງ CCM.

## ຄວາມຮັບຜິດຊອບໃນການນຳໃຊ້ຊັບສິນຂອງ CCM

ເງິນທຶນ, ພື້ນທີ່ຫ້ອງການ, ອຸປະກອນ, ແລະ ພາຫະນະ ທີ່ມອບໃຫ້ CCM ແມ່ນເພື່ອຮັບປະກັນວ່າ CCM ຈະສາມາດດຳເນີນງານໄດ້ຢ່າງເຕັມຮູບແບບ. ສະມາຊິກ CCM ເປັນເຈົ້າການຕໍ່ຊັບສິນເຫຼົ່ານັ້ນ, ສະນັ້ນພວກເຂົາເຈົ້າຈະຕ້ອງ:

- ຄວນນຳໃຊ້ຊັບສິນຂອງ CCM ເຂົ້າໃນວຽກງານສ່ວນຕົວ ຫຼື ຄວາມຕ້ອງການທີ່ບໍ່ກ່ຽວຂ້ອງກັບກິດຈະກຳຂອງ CCM.
- ຮັບປະກັນບໍ່ໃຫ້ຊັບສິນເປ່ເພເສຍຫາຍ, ຖືກນຳໃຊ້ໃນທາງທີ່ຜິດ, ຫຼື ສູນເສຍ.
- ສະແດງຄຳຄິດຄຳເຫັນໃນກໍລະນີທີ່ມີຂໍ້ສົງໄສວ່າມີການນຳໃຊ້ຊັບສິນຢ່າງບໍ່ໝາະສົມ.

## ຄວາມຮັບຜິດຊອບໃນການຄຸ້ມຄອງຂໍ້ມູນຂ່າວສານ

ຄວາມຄາດຫວັງຕໍ່ສະມາຊິກ CCM ໃນຄວາມໂປ່ງໃສກັບການເກັບຮັກສາຄວາມລັບ. ພວກເຂົາເຈົ້າຄວນປະຕິບັດດັ່ງນີ້:

- ບໍ່ແບ່ງປັນຂໍ້ມູນທີ່ CCM ຫຼື ກອງທຶນໂລກ ໄດ້ກຳນົດຢ່າງເປັນທາງການວ່າເປັນຄວາມລັບ.
- ເມື່ອຂໍ້ມູນຂ່າວສານດັ່ງກ່າວ ຫາກບໍ່ເປັນຄວາມລັບ, ຕ້ອງຮັບປະກັນວ່າມັນຈະຖືກເຜີຍແຜ່ໃຫ້ແກ່ອົງກອນ ແລະ ສາທາລະນະ ພາຍໃນກຳນົດເວລາທີ່ເໝາະສົມ.
- ຮັບປະກັນວ່າສະມາຊິກ CCM ຜູ້ອື່ນໆ ຮັບຮູ້ ແລະ ປະຕິບັດຕາມກົດລະບຽບກ່ຽວກັບການເກັບຮັກສາຄວາມລັບ.

- ມີຄວາມຮັບຜິດຊອບໃນການນໍາໃຊ້ ແລະ ເກັບຮັກສາ ID ຄອມພິວເຕີ ແລະ ລະຫັດຜ່ານ.
- ລະມັດລະວັງຕໍ່ການໂຈມຕີ ແລະ ການຫລອກລວງຜ່ານຊ່ອງທາງອິນເຕີເນັດ ແລະ ລາຍງານຕໍ່ຄະນະນໍາ CCM ທັນທີຖ້າຫາກມີກໍລະນີດັ່ງກ່າວ

## ຄວາມຊື່ສັດ

ຄາດຫວັງວ່າບັນດາສະມາຊິກ CCM ຈະປະຕິບັດຕົນດັ່ງນີ້:

**ບໍ່ລໍາອຽງ,**

**ຄວາມໜ້າເຊື່ອຖື ແລະ ຄວາມຊັດເຈນ,**

**ຄວາມເປັນທໍາ ແລະ ຄວາມສອດຄ່ອງ, ແລະ**

**ຄວາມຈິງໃຈ.**

ໃນຖານະທີ່ສະມາຊິກ CCM ເປັນຜູ້ຕັດສິນໃຈ, ສະມາຊິກ CCM ຕ້ອງຈະຕ້ອງຖືເອົາຜົນປະໂຫຍດຂອງປະຊາກອນທີ່ໄດ້ຮັບຜົນກະທົບຈາກສາມພະຍາດນີ້ ເປັນບຸລິມະສິດ.

## ຄວາມບໍ່ລໍາອຽງ ແລະ ການຫຼີກລ້ຽງຂໍ້ຂັດແຍ່ງດ້ານຜົນປະໂຫຍດ

ສະມາຊິກ CCM ມີສາຍສໍາພັນທີ່ສໍາຄັນ ກັບອົງກອນອື່ນ ນອກເໜືອຈາກພາລະບົດບາດຂອງຕົນໃນ CCM, ເຊັ່ນວ່າ:

- ພາລະບົດບາດອື່ນໆໃນອົງກອນອື່ນ
- ຄວາມຮັບຜິດຊອບຕໍ່ເພື່ອນ ແລະ ຄອບຄົວ
- ເປັນສະມາຊິກໃນພັກການເມືອງ ຫຼື ລັດຖະບານ
- ເປັນເຈົ້າຂອງບໍລິສັດ ຫຼື ອົງການ NGO, ຫຼື ເປັນສະມາຊິກສະພາບໍລິຫານ

ສະມາຊິກ CCM ອາດຈະໄດ້ຮັບ ຫຼື ຈັດຫາເພື່ອມອບຂອງຂວັນ, ລວມທັງຜົນປະໂຫຍດ, ຄ່າໃຊ້ຈ່າຍໃນການເດີນທາງ ແລະ ກຽດນິຍົມ ນອກເໜືອຈາກພາລະບົດບາດຂອງຕົນໃນຖານະສະມາຊິກ CCM.

ການພົວພັນ ຫຼື ຂອງຂວັນເຫຼົ່ານີ້ ອາດສົ່ງຜົນຕໍ່ການປະຕິບັດໜ້າທີ ໃນນາມສະມາຊິກ CCM ເຊັ່ນ:

- ການຕັດສິນບັນຫາ ທີ່ບໍ່ຄໍານຶງເຖິງຜົນປະໂຫຍດສູງສຸດ ຕໍ່ຄວາມຕ້ອງການດ້ານສາທາລະນະສຸກ.
- ການໃຊ້ເວລາ ຫຼື ຊັບພະຍາກອນຂອງ CCM ໂດຍບໍ່ເໝາະສົມ
- ການເປີດເຜີຍຂໍ້ມູນ ທີ່ເປັນຄວາມລັບຂອງ CCM.
- ການລະເມີດນະໂຍບາຍ ຫຼື ກົດໝາຍ ທີ່ກ່ຽວຂ້ອງກັບຄວາມຊື່ສັດ (ເຊັ່ນ: ການສໍ້ໂກງ ຫຼື ການສໍ້ລາດບັງຫຼວງ)

ຄາດຫວັງວ່າ ສະມາຊິກ CCM ຈະຫລີກລ້ຽງໃນການມີສ່ວນຮູ້ເຫັນ, ມີຄວາມເປັນໄປໄດ້ ແລະ ເກີດມີຂໍ້ຂັດແຍ່ງດ້ານຜົນປະໂຫຍດຂອງປະເພດຕ່າງເຫຼົ່ານີ້, ສະມາຊິກ CCM **ຕ້ອງ**ປະຕິບັດຕາມນະໂຍບາຍ ຂໍ້ຂັດແຍ່ງດ້ານຜົນປະໂຫຍດ. ເພື່ອໃຫ້ສອດຄ່ອງກັບນະໂຍບາຍດັ່ງກ່າວ, ສະມາຊິກ CCM **ຕ້ອງ**:

- ແຈ້ງໃຫ້ CCM ຊາບໂດຍທັນທີກ່ຽວກັບຜົນປະໂຫຍດທີ່ອາດຈະເກີດຂຶ້ນ ຫຼື ຂໍ້ຂັດແຍ່ງທີ່ເກີດຂຶ້ນ.
- ແຈ້ງໃຫ້ຊາບ ຢ່າງເປັນໄລຍະ ກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດທີ່ມີຜົນກະທົບຕໍ່ບຸກຄົນໃດໜຶ່ງໃນ CCM
- ບໍ່ຍອມຮັບ ຫຼື ມອບຂອງຂວັນທີ່ຕິດພັນກັບພາລະບົດບາດຂອງຕົນ ໃນການເປັນສະມາຊິກ CCM

ໃນກໍລະນີທີ່ເກີດມີ ຫຼື ຮູ້ເຫັນ ກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດຂອງສະມາຊິກໃດໜຶ່ງ, ສະມາຊິກ CCM **ຕ້ອງ** ປະຕິບັດຕາມນະໂຍບາຍຂໍ້ຂັດແຍ່ງດ້ານຜົນປະໂຫຍດຂອງ CCM, ເຊິ່ງລວມມີ:

- ຖອນຕົວອອກຈາກການສົນທະນາ, ການຕັດສິນ ແລະ ການລົງຄະແນນສຽງ ກ່ຽວກັບບັນຫາທີ່ເຫັນວ່າຕົນເອງມີຂໍ້ຂັດແຍ່ງດ້ານຜົນປະໂຫຍດ, ລວມທັງການຕັດສິນ ທີ່ກ່ຽວຂ້ອງກັບການຕິດຕາມກວດກາ ແລະ ການຄັດເລືອກ ຫຼື ການສະໜອງທຶນໃຫ້ແກ່ຜູ້ຈັດຕັ້ງປະຕິບັດ.
- ສະແດງຄຳຄິດຄຳເຫັນໃນກໍລະນີທີ່ຕົນກັງວົນວ່າ ສະມາຊິກ CCM ໃດໜຶ່ງ ມີສາຍພົວພັນ ແລະ ບໍ່ຍອມເປີດເຜີຍ ຫຼື ບໍ່ປະຕິບັດຕົນໃຫ້ຖືກຕ້ອງເໝາະສົມ

## ຄວາມໜ້າເຊື່ອຖື ແລະ ຄວາມຊັດເຈນ

ການຕັດສິນໃຈໃນການລົງທຶນດ້ານສາທາລະນະສຸກທີ່ສຳຄັນ ແມ່ນເຮັດຂຶ້ນບົນພື້ນຖານຂອງຂໍ້ມູນ ແລະ ຂ່າວສານ ເຊັ່ນ:

- ລັກສະນະ ແລະ ຂອບເຂດການແຜ່ລະບາດຂອງພະຍາດ
- ລັກສະນະ ແລະ ລະດັບຜົນກະທົບຂອງກິດຈະກຳ.
- ລັກສະນະ ແລະ ອຸປະສັກໃນການເຂົ້າເຖິງການບໍລິການດ້ານສຸຂະພາບ ສຳລັບປະຊາກອນທີ່ຖືກກະທົບ ແລະ ດ້ອຍໂອກາດທີ່ສຸດ.
- ບາດກ້າວ ແລະ ຄຸນນະພາບຂອງການຈັດຕັ້ງປະຕິບັດແຜນງານ
- ຄ່າໃຊ້ຈ່າຍໃນກິດຈະກຳ.
- ຄວາມໜ້າເຊື່ອຖື ແລະ ຄຸນນະພາບຂອງລະບົບສາທາລະນະສຸກ.
- ຄວາມໜ້າເຊື່ອຖື ແລະ ຄຸນນະພາບຂອງຜູ້ຈັດຕັ້ງປະຕິບັດ.

ດັ່ງນັ້ນ, ຄາດຫວັງວ່າ ສະມາຊິກ CCM ຈະຮັບປະກັນໄດ້ວ່າຂໍ້ມູນເຫຼົ່ານີ້ໄດ້ຖືກລາຍງານ ແລະ ນຳໃຊ້ຢ່າງຖືກຕ້ອງ ແລະ ຄົບຖ້ວນ. ສະມາຊິກ CCM ຍັງ**ຕ້ອງ**ສະແດງຄຳຄິດຄຳເຫັນຖ້າພວກເຂົາມີຂໍ້ສົງໄສວ່າຂໍ້ມູນຂໍ້ມູນ ຫຼື ຂ່າວສານ ມີຂໍ້ບົກຜ່ອງ ໂດຍບໍ່ເຈດຕະນາ ຫຼືໂດຍເຈດຕະນາ ເຊັ່ນ: ການສວຍໃຊ້, ອັດຕາເງິນເຟີ້, ຄວາມຜິດພາດໃນການກວດນັບ, ບໍ່ຄົບຖ້ວນ ຫຼື ລາຍງານການເງິນທີ່ບໍ່ຖືກຕ້ອງ.

## ຄວາມຍຸຕິທຳ ແລະ ຄວາມສອດຄ່ອງ

ສະມາຊິກ CCM **ຕ້ອງ**ປະຕິບັດ ແລະ ນຳໃຊ້ກົດລະບຽບ, ຄຳແນະນຳ, ຂໍ້ກຳນົດ ຫຼື ນະໂຍບາຍ ຂອງກອງທຶນໂລກ ແລະ CCM ດ້ວຍຄວາມຍຸຕິທຳ ແລະ ຄວາມສອດຄ່ອງ. ຖ້າສະມາຊິກ CCM ມີຂໍ້ສົງໄສວ່າ ກົດລະບຽບ, ຄຳແນະນຳ, ຂໍ້ກຳນົດ ຫຼື ນະໂຍບາຍ ຂອງ CCM ບໍ່ໄດ້ຮັບການຈັດຕັ້ງປະຕິບັດ, ສະມາຊິກ CCM ມີໜ້າທີ່ໃນການສະແດງຄຳຄິດຄຳເຫັນ.

**ນະໂຍບາຍກອງທຶນທົ່ວໂລກ ທີ່ກ່ຽວຂ້ອງ ສຳລັບບັນດາ CCMs**

| ເອກະສານອ້າງອີງ | ແນະນຳກ່ຽວກັບ: |
|---|---|
| ນະໂຍບາຍ ຂອງ CCM * | ➢ ພາລະບົດບາດ ແລະ ໜ້າທີ່ຫຼັກຂອງບັນດາ CCMs ແລະ ສະມາຊິກ<br>➢ 6 ເງື່ອນໄຂ ສຳລັບການຂໍຮັບທຶນ ຂອງ CCM<br>➢ ຫຼັກການ ແລະ ການຈັດຕັ້ງປະຕິບັດທີ່ດີ<br>➢ ຂັ້ນຕອນການທົບທວນຄືນປະສິດທິພາບໃນການດຳເນີນງານຂອງ CCM<br>➢ ການຊ່ວຍເຫຼືອທາງດ້ານວິຊາການ ແລະ ການເງິນ ໃຫ້ແກ່ບັນດາ CCM<br>➢ ມາດຕະຖານທີ່ກອງທຶນໂລກຖືວ່າມີຄວາມສຳຄັນຕໍ່ການປະເມີນປະສິດຕິພາບໃນການດຳເນີນງານຂອງ CCM, ແລະ ຂໍ້ສະເໜີແນະໂດຍອີງໃສ່ການປະຕິບັດທີ່ດີ |
| ຂໍ້ກຳນົດດ້ານຈັນຍາບັນສຳລັບຜູ້ຮັບ ** | ➢ ຫຼັກການ ແລະ ມາດຕະຖານຂອງການປະພຶດສຳລັບຜູ້ທີ່ໄດ້ຮັບການຊ່ວຍເຫລືອລ້າ ຈາກກອງທຶນໂລກ |
| ນະໂຍບາຍກ່ຽວກັບຈັນຍາບັນ ແລະ ຂໍ້ຂັດແຍ່ງດ້ານຜົນປະໂຫຍດ ** | ➢ ຊີ້ໃຫ້ເຫັນຂໍ້ຂັດແຍ່ງດ້ານຜົນປະໂຫຍດທີ່ກຳລັງເກີດຂຶ້ນ ຫຼື ອາດຈະເກີດຂຶ້ນ<br>➢ ຄວາມຮັບຜິດຊອບໃນການເປີດເຜີຍຂໍ້ຂັດແຍ່ງດ້ານຜົນປະໂຫຍດທີ່ກຳລັງເກີດຂຶ້ນ ຫຼື ອາດຈະເກີດຂຶ້ນ, ແລະ ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ |
| ນະໂຍບາຍ ແລະ ຂັ້ນຕອນການອອກສຽງ** | ➢ ຂັ້ນຕອນການລາຍງານທີ່ເປັນຄວາມລັບຂອງກອງທຶນໂລກເພື່ອ ຕໍ່ກັບການປະພຶດທີ່ບໍ່ຖືກຕ້ອງ ຫຼື ຄວາມຜິດປົກກະຕິ ເພື່ອໃຫ້ມີການແກ້ໄຂທີ່ເໝາະສົມ |
| ນະໂຍບາຍການຂໍທຶນ ສຳລັບ CCM ***<br><br>ຄຳແນະນຳກ່ຽວກັບການຂໍທຶນສຳລັບ CCM ***<br><br>ຄຳແນະນຳກ່ຽວກັບຂັ້ນຕອນໃນການຂໍທຶນ ສຳລັບ CCM*** | ➢ ຄຳແນະນຳກ່ຽວກັບວິທີການສະໝັກເພື່ອຂໍທຶນຈາກກອງທຶນໂລກ ສຳລັບ CCM, ການນຳໃຊ້ເງິນທຶນ CCM ທີ່ເໝາະສົມ, ແລະ ວິທີການຕິດຕາມການໃຊ້ຈ່າຍ ທີ່ຄວນປະຕິບັດໂດຍບັນດາ CCM |

* ຂໍ້ມູນເພີ່ມເຕີມ https://www.theglobalfund.org/en/country-coordinating-mechanism/

** ຂໍ້ມູນເພີ່ມເຕີມ https://www.theglobalfund.org/en/country-coordinating-mechanism/ethics/

*** ຂໍ້ມູນເພີ່ມເຕີມ https://www.theglobalfund.org/en/country-coordinating-mechanism/funding/

## ຄວາມຊື່ສັດ

ສະມາຊິກ CCM ຕ້ອງປ້ອງກັນການສວຍໃຊ້ຊັບພະຍາກອນ, ການສໍ້ໂກງ ແລະ ການສໍ້ລາດບັງຫຼວງ ແລະ ໂດຍສະເພາະ ປະຕິບັດຕາມນະໂຍບາຍກອງທຶນໂລກ ເພື່ອຕ້ານການສໍ້ໂກງ ແລະ ການສໍ້ລາດບັງຫຼວງ. ພວກເຂົາຕ້ອງບໍ່ເມີນເສີຍ ຫຼື ເຂົ້າຮ່ວມໃນການຈັດການໃດໆ ເພື່ອດັດແກ້, ລາຍງານຂ່າວປອມ, ຫຼື ການນຳໃຊ້ກອງທຶນ, ຊັບສິນ ຫຼື ຂໍ້ມູນຂອງ ກອງທຶນໂລກເພື່ອສິ່ງອື່ນ ນອກເໜືອຈາກຈຸດປະສົງທີ່ວາງໄວ້, ໂດຍສະເພາະບໍ່ແມ່ນເພື່ອຈຸດປະສົງສ່ວນຕົວ, ການກໍ່ ອາຊະຍາກຳ ຫຼື ຜົນປະໂຫຍດທາງການເມືອງ. ສະມາຊິກ CCM ຕ້ອງສະໜັບສະໜູນ ຄວາມພະຍາຍາມເພື່ອ:

- **ປ້ອງກັນການສໍ້ລາດບັງຫຼວງ**: ຕ້ອງຮັບປະກັນວ່າກອງທຶນຂອງກອງທຶນໂລກ ຖືກນຳໃຊ້ຢ່າງຖືກຕ້ອງ.
- **ກວດເບິ່ງການສໍ້ລາດບັງຫຼວງ**: ຕັດສິນລົງໂທດຢ່າງຈິງຈັງ ສຳລັບບຸກຄົນທີ່ມີສ່ວນກ່ຽວຂ້ອງໃນການສໍ້ລາດບັງ ຫຼວງ.
- **ຕັ້ງຄຳຖາມຕໍ່ການສໍ້ລາດບັງຫຼວງ**: ສະແດງຄຳຄິດຄຳເຫັນ ໃນກໍລະນີມີຄວາມສົງໄສກ່ຽວກັບການສໍ້ລາດບັງຫຼວງ.

## ກອງທຶນໂລກຫ້າມ ແລະ ຕ້ານທຸກຮູບແບບຂອງການສໍ້ໂກງ ແລະ ການສໍ້ລາດບັງຫຼວງ.

ນະໂຍບາຍຂອງກອງທຶນໂລກເພື່ອຕ້ານການສໍ້ໂກງ ແລະ ການສໍ້ລາດບັງຫຼວງໄດ້ກ່າວເຖິງ "ຂໍ້ຫ້າມໃນການປະຕິບັດ" ທີ່ ສະມາຊິກ CCM ທຸກຄົນຕ້ອງໄດ້ປ້ອງກັນ, ກວດກາ ແລະ ລາຍງານ.

ການປະຕິບັດຕໍ່ໄປນີ້ແມ່ນຖືກຫ້າມ:

- **ການສໍ້ລາດບັງຫຼວງ:**

  ສິນບົນ, ຄ່າຕອບແທນ, ແລະ ການຕັດສິນໃຈທີ່ມີອິດທິພົນໃນການແລກປ່ຽນເພື່ອຄວາມພຶງພໍໃຈ

- **ການສໍ້ໂກງ:**

  ການເຊື່ອງອຳກ່ຽວກັບການນຳໃຊ້ເງິນທຶນ ຫຼື ຂໍ້ມູນທີ່ໃຊ້ໃນການຕັດສິນກ່ຽວກັບທຶນ

- **ການນາບຂູ່:**

  ການບັງຄັບ ຫຼື ຂົ່ມຂູ່ຜູ້ໃດຜູ້ໜຶ່ງ ເພື່ອໃຫ້ເຂົາເຈົ້າດຳເນີນການຢ່າງບໍ່ຖືກຕ້ອງ

- **ການສົມຮູ້ຮ່ວມຄິດ:**

  ເມື່ອໃດກໍ່ຕາມທີ່ສອງຄົນ ຫຼື ຫຼາຍກວ່ານັ້ນ ຫາກຮ່ວມມືກັນໃນການລະເມີດຂໍ້ຫ້າມ

- **ການສວຍໃຊ້**:

  ການລັກ, ການຍັກຍອກເງິນ, ຫຼື ເຮັດໃຫ້ສິ້ນເປືອງໂດຍເຈດຕະນາ

- **ການຂັດຂວາງ:**

  ການບໍ່ລາຍງານກ່ຽວກັບການລະເມີດຂໍ້ຫ້າມ ຕໍ່ກອງທຶນໂລກເຖິງວ່າຈະມີຄວາມສົງໄສ ຫຼື ຮູ້ວ່າ, ຫຼື ກີດຂວາງ ກອງທຶນໂລກຈາກການຊອກຫາຫຼັກຖານຂອງການລະເມີດຂໍ້ຫ້າມ

- **ການແກ້ແຄ້ນ:**

  ການຄຸກຄາມ ຫຼື ພະຍາຍາມທຳຮ້າຍຜູ້ໃດຜູ້ໜຶ່ງ ທີ່ປະຕິເສດ ການເຂົ້າຮ່ວມໃນການລະເມີດຂໍ້ຫ້າມ ຫຼື ຈິງໃຈລາຍ ງານກ່ຽວກັບການລະເມີດດັ່ງກ່າວ

- **ການຟອກເງິນ:**

  ການຄຸ້ມຄອງ ຫຼື ການເຄື່ອນຍ້າຍເງິນທຶນທີ່ຕິດພັນກັບການກໍ່ອາຊະຍາກຳ

- **ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ:**

ການບໍລິຫານຈັດການ ຫຼື ການເຄື່ອນຍ້າຍເງິນທຶນທີ່ມີຈຸດປະສົງເພື່ອສະໜັບສະໜູນການກໍ່ການຮ້າຍ

## ກຽດຕິຍົດ ແລະ ຄວາມເຄົາລົບ

ສະມາຊິກ CCM ຕ້ອງປະຕິບັດຕໍ່ປະຊາຊົນດ້ວຍຄວາມເຄົາລົບ ແລະ ໃຫ້ກຽດ ໂດຍ:

**ສົ່ງເສີມກຽດສັກສີຂອງຜູ້ໄດ້ຮັບການຊ່ວຍເຫຼືອ, ແລະ**

**ເຄົາລົບເພື່ອນຮ່ວມງານ.**

## ຮັບປະກັນການເຄົາລົບສິດທິມະນຸດ, ລວມທັງການບໍ່ຈໍາແນກ

ສະມາຊິກ CCM **ຕ້ອງຮັບປະກັນວ່າ**ບັນດາໂຄງການທີ່ໄດ້ຮັບການສະໜັບສະໜູນ ຈາກກອງທຶນໂລກ ໄດ້ຖືກອອກແບບມາເພື່ອໃຫ້ມີຄວາມເປັນເອກະພາບ, ສົ່ງເສີມກຽດສັກສີ, ຄວາມເຄົາລົບ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ປະຊາຊົນ ແລະ ຊຸມຊົນທີ່ໄດ້ຮັບຜົນກະທົບຈາກໂລກເອດ, ວັນນະໂລກ ແລະ ໄຂ້ຍຸງ, ລວມທັງປະຊາກອນທີ່ມີຄວາມສ່ຽງ, ໂດຍສະ ເພາະເມື່ອເຂົາເຈົ້າປະເຊີນຕໍ່ການດູຖູກ ແລະ ການຈໍາແນກ. ສະມາຊິກ CCM ແບ່ງປັນຄວາມຮັບຜິດຊອບໃນການຫ້າມ, ປ້ອງກັນ ແລະ ຕອບສະໜອງ ຕໍ່ການແຊກແຊງ ແລະ ການໃຊ້ອໍານາດ, ການຂູດຮີດ ແລະ ການລ່ວງລະເມີດທາງເພດ, ລວມທັງກິດຈະກໍາທາງເພດກັບເດັກ ໃນໂຄງການຂອງກອງທຶນໂລກ.

ໂດຍໄດ້ໃຫ້ນິຍາມ ດັ່ງຕໍ່ໄປນີ້:

- ການຂູດຮີດທາງເພດແມ່ນການທໍາຮ້າຍຕົວຈິງ ຫຼື ພະຍາຍາມທີ່ກະທໍາຕໍ່ຜູ້ທີ່ບໍ່ສາມາດປ້ອງກັນຕົວເອງໄດ້, ການໃຊ້ກໍາລັງ, ຫຼື ຄວາມໄວ້ວາງໃຈ, ສໍາລັບຈຸດປະສົງທາງເພດ, ລວມທັງ, ແຕ່ບໍ່ຈໍາກັດ, ຫາຜົນປະໂຫຍດທາງດ້ານການເງິນ, ທາງສັງຄົມ ຫຼື ທາງການເມືອງຈາກການຂູດຮີດທາງເພດບຸກຄົນອື່ນ.
- ການລ່ວງລະເມີດທາງເພດ ໝາຍເຖິງການລ່ວງລະເມີດທາງເພດທີ່ແທ້ຈິງ ຫຼື ເປັນໄພຂົ່ມຂູ່ຕໍ່ລັກສະນະທາງເພດ, ບໍ່ວ່າຈະເປັນການບັງຄັບ ຫຼື ຢູ່ພາຍໃຕ້ເງື່ອນໄຂທີ່ບໍ່ສະເໝີພາບ ຫຼື ບັງຄັບນາບຂູ່.
- ການຖຸກຄາມທາງເພດແມ່ນການກະທໍາ ທີ່ບໍ່ເໝາະສົມທາງເພດ ທີ່ມີຈຸດປະສົງ ຫຼື ສະແດງເຖິງການກະທໍາຜິດ ຫຼື ເຮັດໃຫ້ຖືກອັບອາຍ. ການຖຸກຄາມທາງເພດອາດຈະກ່ຽວຂ້ອງກັບການປະພຶດທາງວາຈາ, ທີ່ບໍ່ແມ່ນຄໍາເວົ້າ ຫຼື ທາງການສະແດງອອກ, ລວມທັງການສື່ສານເປັນລາຍລັກອັກສອນ ແລະ ທາງອີເລັກໂທຣນິກ, ແລະ ອາດຈະເກີດຂຶ້ນລະຫວ່າງບຸກຄົນທີ່ມີເພດດຽວກັນ ຫຼື ເພດຕ່າງກັນ.
- ກິດຈະກໍາທາງເພດກັບເດັກ ໝາຍເຖິງກິດຈະ ກໍາ ທາງເພດກັບບຸກຄົນທີ່ມີອາຍຸຕໍ່າ ກວ່າ 18 ປີ ໂດຍບໍ່ອີງໃສ່ເກນອາຍຸຂອງຄົນສ່ວນໃຫຍ່ ຫຼື ເກນອາຍຸທີ່ມີການເຫັນດີຢູ່ໃນທ້ອງຖິ່ນ (ທີ່ໄດ້ລະບຸໃນນິຕິກໍາ ຂອງທ້ອງຖິ່ນດັ່ງກ່າວ). ຂໍ້ອ້າງກ່ຽວກັບອາຍຸຂອງເດັກທີ່ບໍ່ຖືກຕ້ອງຕາມຄວາມຈິງ ແມ່ນບໍ່ຖືເປັນເຫດຜົນ.

  ສະມາຊິກ CCM ຕ້ອງໄດ້ລາຍງານທຸກຂໍ້ກ່າວຫາກ່ຽວກັບການຂູດຮີດ ແລະ ການລ່ວງລະເມີດທາງເພດ, ແລະການຖຸກຄາມທາງເພດຕໍ່ກອງທຶນໂລກ. ກະລຸນາເບິ່ງພາກ" ສະແດງຄໍາຄິດຄໍາເຫັນ" ໃນຂໍ້ກໍາ ນົດນີ້ ສໍາລັບຄໍາແນະນໍາ ກ່ຽວກັບວິທີລາຍງານ.

## ການເຄົາລົບຊຶ່ງກັນ ແລະ ກັນ

ໃນການພົວພັນກັບສະມາຊິກ CCM ອື່ນໆ, ຜູ້ຈັດຕັ້ງປະຕິບັດ, ແລະ ພະນັກງານກອງທຶນໂລກ, ສະມາຊິກ CCM ຕ້ອງເຄົາລົບເຊິ່ງກັນແລະ ກັນ.

ສະນັ້ນສະມາຊິກ CCM ຕ້ອງປະຕິບັດ ແລະ ສົ່ງເສີມການສົນທະນາທີ່ມີຄວາມເຄົາລົບນັບຖື, ການຕັດສິນໃຈ ແລະການພົວພັນທາງສັງຄົມໃນທຸກສະຖານທີ່ທີ່ກ່ຽວຂ້ອງກັບ CCM. ພວກເຂົາເຈົ້າຕ້ອງປະຕິບັດຕໍ່ເພື່ອນຮ່ວມງານດ້ວຍຄວາມສຸພາບ ແລະ ຄວາມເຄົາລົບ, ໂດຍບໍ່ມີການຖຸກຄາມ, ຫຼື ທາງຮ່າງກາຍ ຫຼື ວາຈາ, ແລະ ບໍ່ແຊກແຊງຕໍ່ການດໍາເນີນກິດຈະກໍາຂອງເຂົາເຈົ້າ. ພວກເຂົາເຈົ້າຕ້ອງຮັບປະກັນວ່າການສົນທະນາແລກປ່ຽນຄໍາຄິດຄໍາເຫັນ ໄດ້ມີການຈັດ

ສັນເວລາໃຫ້ຢ່າງພຽງພໍສຳລັບທຸກຄົນ ໃນການສະແດງຄຳຄິດຄຳເຫັນ, ແລະ ການຕັດສິນໃຈໄດ້ຖືກເຮັດຂຶ້ນຫຼັງຈາກການພິຈາລະນາຢ່າງລະອຽດກ່ຽວກັບຄວາມຄິດເຫັນທີ່ສະແດງອອກ ໂດຍສະມາຊິກ CCM ທັງໝົດ.

ສະມາຊິກ CCM **ຈຳເປັນຕ້ອງລະເວັ້ນ**ຈາກການຂົ່ມເຫັງ, ການລົບກວນ, ການຈຳແນກ, ແລະ ການສວຍໃຊ້ອຳນາດຂອງຕົນໃນທຸກຮູບແບບ. ສະມາຊິກ CCM ຖືກຫ້າມບໍ່ໃຫ້ມີການຂູດຮີດ ແລະ ການລ່ວງລະເມີດທາງເພດ, ລວມທັງການລ່ວງລະເມີດທາງເພດເດັກ, ແລະ ການຄຸກຄາມທາງເພດ.

# ການສະແດງຄຳຄິດຄຳເຫັນ

## ການສະແດງຄຳຄິດຄຳເຫັນໝາຍເຖິງຫຍັງ?

ໂດຍທົ່ວໄປ, ການສະແດງຄຳຄິດຕຳເຫັນ ໝາຍເຖິງການຕັ້ງຄຳຖາມ, ສະແດງຂໍ້ຂ້ອງໃຈ, ຫລື ແບ່ງປັນຄວາມຮູ້ກ່ຽວກັບສະຖານະການ ທີ່ກົດລະບຽບນີ້ ຫຼືນະໂຍບາຍອື່ນໆ ບໍ່ໄດ້ຮັບການລະບຸໄວ້ຢ່າງຊັດເຈນພຽງພໍ. ສະມາຊິກ CCM ໄດ້ຮັບການຊຸກຍູ້ໃຫ້ສະໜັບສະໜູນ ເຊິ່ງກັນແລະກັນ ແລະ ມີຄວາມຮັບຜິດຊອບຕໍ່ກັນ ໂດຍການສົນທະນາ ກ່ຽວກັບການຕັດສິນໃຈ ແລະ ການປະພຶດຂອງພວກເຂົາເຈົ້າ ແມ່ນສອດຄ່ອງກັບຂໍ້ກຳນົດສະບັບນີ້ ຫຼື ບໍ່. ຖ້າຄວາມພະຍາຍາມໃນເບື້ອງຕົ້ນ ຂອງເຂົາເຈົ້າ ຫາກຍັງບໍ່ມີຜົນໃຫ້ມີການປ່ຽນແປງທີ່ເໝາະສົມ, ສະມາຊິກ CCM ຈຳເປັນຕ້ອງຍົກບັນຫາດັ່ງກ່າວຂຶ້ນ ເພື່ອສົນທະນາຢ່າງເປັນທາງການ ຕໍ່ຄະນະບໍລິຫານງານ ຂອງ CCM ເຊັ່ນດຽວກັນກັບກອງທຶນໂລກ.

## ການສະແດງຄຳຄິດຄຳເຫັນສາມາດຊ່ວຍໄດ້ບໍ?

ໂດຍຜ່ານການສະແດງຄຳຄິດຄຳເຫັນ, ສະມາຊິກ CCM ເປີດໂອກາດໃຫ້ຜູ້ອື່ນມີຄຳເຫັນ ແລະ ສະໜັບສະໜູນ ພວກເຂົາ:

- **ການຂໍຄວາມກະຈ່າງແຈ້ງ ຫຼື ຄຳແນະນຳ** ເພີ່ມໂອກາດໃຫ້ສະມາຊິກໃນການເຮັດສິ່ງທີ່ຖືກຕ້ອງ.
- **ຊີ້ໃຫ້ເຫັນພຶດຕິກຳ** ທີ່ບໍ່ສອດຄ່ອງກັບຂໍ້ກຳນົດສະບັບນີ້ ທີ່ອາດຈະສົ່ງຜົນຕໍ່ພຶດຕິກຳຂອງເພື່ອນຮ່ວມງານ.
- **ການຍົກບັນຫາດັ່ງກ່າວຂຶ້ນມາສົນທະນາຢ່າງເປັນທາງການ** ຕໍ່ CCM ຊ່ວຍໃຫ້ CCM ສາມາດຕອບສະໜອງຢ່າງເໝາະສົມ ແລະເສີມສ້າງວັດທະນະທຳ ດ້ານຈັນຍາບັນຂອງ CCM.
- **ຂະຫຍາຍ**ບັນຫາຕ່າງໆຕໍ່ກອງທຶນໂລກເພື່ອ:

ຂໍຮັບຄຳແນະນຳ ຈາກເຈົ້າໜ້າທີ່ດ້ານຈັນຍາບັນ ຫຼື OIG ຢ່າງເປັນຄວາມລັບ:

- ການປົກປ້ອງຕົວຕົນຂອງຜູ້ສະແດງຄຳຄິດຄຳເຫັນ
- ການແຊກແຊງ ຂອງກອງທຶນໂລກ ໃນລະດັບປະຕິບັດງານ
- ດຳເນີນການຄົ້ນຫາຄວາມຈິງທີ່ຕ້ອງໄດ້ປະຕິບັດ
- ຖ້າມີຄວາມເໝາະສົມ, ຈະຖືກປະຕິດບັດມາດຕະການການລົງໂທດ
- ຖ້າມີຄວາມເໝາະສົມ, ມາດຕະການທາງດ້ານກົດໝາຍຈະຖືກນຳມາບັງຄັບໃຊ້

# ສະມາຊິກ CCM ມີໜ້າທີ່ໃນການລາຍງານ

CCM ໃນນາມອົງການຈັດຕັ້ງ ມີໜ້າທີ່ໃນການລາຍງານຕໍ່ກອງທຶນໂລກ ກ່ຽວກັບຂໍ້ສົງໃສ ຫຼື ຂໍ້ມູນ ທີ່ກ່ຽວຂ້ອງກັບການສໍ້ໂກງ ແລະ ການສໍ້ລາດບັງຫຼວງທຸກຮູບແບບ (ທີ່ຖືກກຳນົດໄວ້ໃນຂໍ້ຫ້າມ) ແລະ ການລະເມີດສິດທິມະນຸດ, ລວມທັງການຂູດຮີດທາງເພດ, ການລ່ວງລະເມີດທາງເພດ ຫຼື ການຄຸກຄາມທາງເພດ. ສະນັ້ນ, ຖ້າສະມາຊິກ CCM ມີຂໍ້ສົງໃສ ຫຼື ຂໍ້ມູນ ກ່ຽວກັບການລະເມີດຂໍ້ຫ້າມໃນກິດຈະກຳ ຂອງກອງທຶນໂລກ, ເຂົາເຈົ້າມີໜ້າທີ່ ໃນການລາຍງານຂໍ້ມູນດັ່ງກ່າວ, ບໍ່ວ່າຈະຜ່ານຊ່ອງທາງ CCM ຢ່າງເປັນທາງການ, ຫຼື ໂດຍກົງກັບກອງທຶນໂລກ. **ຕ້ອງຮັບຮູ້ວ່າການບໍ່ລາຍງານຄວາມສົງໄສ ຫຼື ຂໍ້ມູນກ່ຽວກັບການລະເມີດຂໍ້ຫ້າມ ຖືເປັນການລະເມີດຂໍ້ຫ້າມໃນການປະຕິບັດ ທີ່ລະບຸໄວ້ໃນຂໍ້ "ການຂັດຂວາງ".**

ກອງທຶນໂລກໄດ້ສ້າງຮູບແບບການລາຍງານທີ່ເປັນຄວາມລັບ ແລະ/ຫຼື ບໍ່ລະບຸຊື່ ແລະ ໃຫ້ຄຳປຶກສາແກ່ສະມາຊິກ CCM ໂດຍຜ່ານຊ່ອງທາງຕ່າງໆ ທີ່ໄດ້ອະທິບາຍໄວ້ໃນແຜນວາດດັ່ງລຸ່ມນີ້. ພາຍໃຕ້ນະໂຍບາຍການໂຄສະນາຫາສຽງຂອງກອງທຶນໂລກ, ຜູ້ທີ່ລາຍງານກ່ຽວກັບການກະທຳຜິດໃດໜຶ່ງ ຕໍ່ອົງການ OIG ອາດຈະເຮັດຂຶ້ນໂດຍບໍ່ເປີດເຜີຍຊື່ ຫຼື ເປັນຄວາມລັບ ແລະ ກອງທຶນໂລກ ຈະດຳເນີນການຕາມຂັ້ນຕອນຕ່າງໆ ເພື່ອປ້ອງກັນ, ຄົ້ນຫາ ແລະ ຕອບໂຕ້ຕໍ່ການແກ້ແຄ້ນໃດໆ ຕໍ່ການລາຍງານ.

## ສະມາຊິກ CCM ຈະລາຍງານ ຫຼື ຂໍຄຳແນະນຳ ຢ່າງເປັນຄວາມລັບໄດ້ແນວໃດ?

ການສະແດງຄຳຄິດຄຳເຫັນ ຕ້ອງມີຄວາມກ້າຫານ ແລະ ຄວາມເຂັ້ມແຂງ, ສະນັ້ນການຕັດສິນໃຈຂອງທ່ານທີ່ຈະປະຕິບັດແມ່ນຈະຖືກຍົກຍ້ອງ ແລະ ຈະຖືກປະຕິບັດດ້ວຍຄວາມເຄົາລົບ ແລະ ເອົາໃຈໃສ່ຕໍ່ຄວາມປອດໄພສ່ວນຕົວຂອງທ່ານ.




### ກອງທຶນໂລກ

ສຳລັບຄຳແນະນຳທົ່ວໄປ:

- FPM **ຂອງທ່ານ**
- CCM Hub: ccm@theglobalfund.org

ສຳລັບຄຳແນະນຳຢ່າງເປັນຄວາມລັບ:

- **ເຈົ້າໜ້າທີ່ຈັນຍາທຳ:** ethics@theglobalfund.org

ເພື່ອລາຍງານກ່ຽວກັບການກະທຳຜິດ:

- **ສາຍດ່ວນ OIG ເປັນຄວາມລັບ:**

  www.ispeakoutnow.org

  +1 704 541 6918 (ບໍ່ເສຍຄ່າບໍລິການ)

## ຂັ້ນຕອນປະຕິບັດ:

- ທ່ານສາມາດ**ເລືອກໄດ້ຫຼາຍຊ່ອງທາງ** ໃນການສະແດງຄຳຄິດຄຳເຫັນຢູ່ໃນ CCM ບໍ່ວ່າຈະເປັນສະມາຊິກຜູ້ອື່ນໆ, ປະທານຄະນະກຳມະການ ຫຼື ຮອງປະທານ, ຫຼື ສະມາຊິກຄະນະກຳມະການບໍລິຫານງານ ຫຼື ກອງເລຂາ CCM. ທ່ານຍັງອາດຈະພິຈາລະນາຕິດຕໍ່ຕົວແທນກອງທຶນທ້ອງຖິ່ນ. ທ່ານສາມາດເລືອກຊ່ອງທາງທີ່ທ່ານເຫັນວ່າສະດວກທີ່ສຸດ.
- ທ່ານຈຳເປັນ**ຕ້ອງ**ລາຍງານໂດຍກົງຕໍ່ກອງທຶນໂລກ (1) ຖ້າທ່ານມີຂໍ້ສົງໃສ ຫຼື ຂໍ້ມູນກ່ຽວກັບການລະເມີດຂໍ້ຫ້າມ; (2) ຖ້າທ່ານບໍ່ສາມາດສະແດງຄຳຄິດຄຳເຫັນຢູ່ໃນ CCM ໄດ້, ຫຼື (3) ຖ້າການລາຍງານຂອງທ່ານຈົນເຖິງປະຈຸບັນຫາກຍັງບໍ່ທັນໄດ້ຮັບການຕອບຮັບຢ່າງເໝາະສົມ. ທ່ານສາມາດຕິດຕໍ່ຊ່ອງທາງຕ່າງໆພາຍໃນກອງເລຂາກອງທຶນໂລກ, ເຊັ່ນວ່າທີມງານລະດັບປະເທດ, FPM, CCM Hub, ເຈົ້າໜ້າທີ່ດ້ານຈັນຍາທຳ, ຫຼື OIG. ທ່ານສາມາດເລືອກ ຊ່ອງທາງທີ່ທ່ານເຫັນວ່າສະດວກທີ່ສຸດ.

- ຖ້າທ່ານມີ**ຄວາມກັງວົນກ່ຽວກັບ**ການຖືກແກ້ແຄ້ນ ຫຼື ຄວາມກັງວົນຕໍ່ຄວາມປອດໄພສ່ວນຕົວ ຫຼື ຄອບຄົວຂອງທ່ານ ຕໍ່ການສະແດງຄໍາຄິດຄໍາເຫັນ, ທ່ານສາມາດດໍາເນີນການຢ່າງເປັນຄວາມລັບໄດ້ (ຕົວຢ່າງ, ເຈົ້າໜ້າທີ່ດ້ານຈັນຍາທໍາຂອງອົງການກອງທຶນໂລກ) ຫຼື ຜ່ານສາຍດ່ວນ "ການສະແດງຄໍາຄິດຄໍາເຫັນ" ຂອງກອງທຶນໂລກ, ບ່ອນທີ່ທ່ານສາມາດລາຍງານໄດ້ຢ່າງເປັນຄວາມລັບ, ໂດຍບໍ່ເປີດເຜີຍຊື່, ຫຼື ຮຽກຮ້ອງສະຖານະຜູ້ແຈ້ງບໍ່ແສ.
- ທຸກຄັ້ງທີ່ທ່ານລົມກັບບຸກຄົນໃດໜຶ່ງ, ໃຫ້**ສະໜອງລາຍລະອຽດຕ່າງໆ**:
  - ✓ ເກີດຫຍັງຂຶ້ນ?
  - ✓ ຢູ່ໃສ?
  - ✓ ເມື່ອໃດ?
  - ✓ ຊື່ຂອງທຸກຄົນມີສ່ວນຮ່ວມ
  - ✓ ເປັນຫຍັງສິ່ງດັ່ງກ່າວຈຶ່ງເປັນບັນຫາ?
  - ✓ ຂໍ້ມູນອື່ນໆ
- **ຖ້າເປັນໄປໄດ້, ຂຽນບັນທຶກທ່ານເວົ້າຫຍັງ ກັບໃຜ, ເວລາໃດ ແລະ ຄໍາຕອບທີ່ທ່ານໄດ້ຮັບ.** ສິ່ງເຫຼົ່ານັ້ນສາມາດສະແດງໃຫ້ເຫັນວ່າທ່ານໄດ້ປະຕິບັດໜ້າທີ່ ຂອງທ່ານໃນການລາຍງານ.
- **ຈົ່ງຢ່າຢຸດທີ່ຈະສະແດງຄໍາຄິດຄໍາເຫັນ**: ຖ້າບັນຫາດັ່ງກ່າວຍັງສືບຕໍ່ ຫຼື ເກີດຂຶ້ນຊໍ້າອີກ, ທ່ານກໍ່ສາມາດນໍາສະເໜີຜ່ານຊ່ອງທາງອື່ນເພື່ອຫາວິທີທາງໃນການແກ້ໄຂ.

ກອງທຶນໂລກ ຕ້ານພະຍາດ
ເອດ, ວັນນະໂລກ ແລະ ໄຂ້ຍຸງ
Global Health Campus
Chemin du Pommier 40
1218 Grand-Saconnex
Geneva, Switzerland
theglobalfund.org
T +41 58 791 1700